# ອັບເດັຍເຊ (ອາບັດປາ)

## ເອດອມຈະຖືກໂທດຢ່າງແນ່ນອນ

ໃຈຄວາມສຳຄັນ ການຕອບແທນ

ຂໍ້ຄວາມສຳຄັນ ຂໍ້ ໑໕

ຈຳນວນບົດ ໑ ບົດ

ແຕ່ປີ ໕໘໖-໕໘໓ ຫລື ໘໘໐-໘໗໐ ກ່ອນ ຄ.ສ.

ປະຈຳປູ່ທີ ປູດາ

ອາບເດັບເຊແປວ່າ ຜູ້ຂ້າໃຊ້ຂອງພຣະເຢໂຮວາ

ຜູ້ທຳນວາຍຄົນທີ ໑

### ໑. ວ່າດ້ວຍຄາວສໄມຂອງອາບເດັບເຊ

ຄຣູສອນຫລາຍ ຄົນຄິດວ່າ ອັບເດັຍເຊ ໄດ້ ເປັນຜູ້ ທຳນວາຍກ່ອນ ທຸກ ໆ ຄົນ ເຂົາໄດ້ເວົ້າເຖິງເອດອມຜູ້ໄດ້ເຂົ້າສ່ວນກັບພວກສັດຕຣູ ຂອງ ພວກອິສຣາເອັນ (ຂໍ້ ໑໑-໑໔) ແລະເຫດການນີ້ຖືກຕ້ອງກັນກັບເຫດ ການທີ່ຂຽນໄວ້ໃນໜັງສື ໒ ຂ່າວຄາວ ໒໑:໘-໑໐, ໑໖-໑໗ ສນັ້ນເຂົາ ບອກເຣື່ອງນີ້ໄດ້ເກີດຂຶ້ນໃນຣະຫວ່າງ ປີ ໘໘໐-໘໗໐ ແຕ່ຄຣູສອນລາງ ຄົນຄິດວ່າ ອັບເດັຍເຊໄດ້ຂຽນເວລາເມືອງເຢຣູຊາເລັມຖືກທຳລາຍຄືໃນ ປີ ໕໘໖ ເພາະຊາວເອດອມກໍດີໃຈຍ້ອນການນັ້ນ (ຄຳເພງຮ່ຳໄຮ ໔:໒໑-໒໒)

## ໒. ວ່າດ້ວຍຄຳທຳນວາຍຂອງອັບເດັບເຍ

ເປັນຄຳທຳນວາຍທີ່ຕໍ່ສູ້ເອດອມ ຂໍ້ ໑໐ ພວກເຂົາເປັນລູກຫລານຂອງເອຊາອຶ. ອ້າຍຂອງຢາໂຄບ (ຕົ້ນເດີມ ໓໖:໑) ເອດອມໄດ້ຕໍ່ສູ້ພວກອິສຣາເອັນຫລາຍເທື່ອ ເຂົາຈະຕ້ອງຖືກທຳລາຍແລະຈະຖືກພຣະເຈົ້າຊົງລົງໂທດ (໑໐,໑໔) ແຕ່ພວກອິສຣາເອັນນັ້ນພຣະເຈົ້າຊົງໂຜດໃຫ້ພົ້ນແລະຈະຊົງປະທານພຣະພອນໃຫ້ແກ່ພວກເຂົາ ຄຳທຳນວາຍນີ້ໄດ້ສຳເຣັດແລ້ວນຶ່ງສ່ວນຄືຕົວເອດອມນັ້ນໄດ້ດັບສູນໄປແລະຄຳທຳນວາຍນີ້ຍັງຈະຕົກຖືກຊາວຕ່າງປະເທດທີ່ຕໍ່ສູ້ພວກອິສຣາເອັນ

## ໓. ການແບ່ງເປັນພາກ

ພາກທີ ໑ ວ່າດ້ວຍໂທດຂອງເອດອມ ຂໍ້ ໑-໑໖

ກ. ເອດອມຈະຖືກໂທດ ຂໍ້ ໑-໙

ຂ. ສາເຫດຂອງໂທດນັ້ນ ຂໍ້ ໑໐-໑໔

ຄ. ໂທດນັ້ນຄືຢ່າງໃດແດ່ ຂໍ້ ໑໕-໑໖

ພາກທີ ໒ ວ່າດ້ວຍຄວາມພົ້ນແຫ່ງ
ພວກອິສຣາເອັນ ຂໍ້ ໑໗-໒໑

ກ. ໄຊຊະນະຂອງພວກອິສຣາເອັນ ຂໍ້ ໑໗-໑໘

ຂ. ຊັບສົມບັດຂອງພວກອິສຣາເອັນ ຂໍ້ ໑໙-໒໐

ຄ. ການຈັດຕັ້ງກັນຂຶ້ນຂອງພວກອິສຣາເອັນ ຂໍ້ ໒໑